ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ
ຖະໜົນ ເລກ 7, ບ້ານ ໂພນສະຫວັນກາງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ທຫລ.ຊຂ ເຜີຍແຜ່ກົດໝາຍ ວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ




ໃນວັນທີ **05** ສິງຫາ **2021** ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຂຶ້ນທີ່ສະໂມສອນເມືອງຄູນ ແຂວງຊຽງຂວາງ ໂດຍພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ວຽງພອນ ເມືອງຈະເລີນ ເຈົ້າເມືອງ ເມືອງຄູນ ແລະ ທ່ານ ເພັດສະລາດ ວົງພະຈັນ ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ, ມີບັນດາຜູ້ຕາງໜ້າຈາກຫ້ອງການຕ່າງໆ, ບັນດາກຸ່ມບ້ານ, ນາຍບ້ານ ອ້ອມຂ້າງເມືອງຄູນ ເຂົ້າຮ່ວມຫຼາຍກວ່າ 50 ທ່ານ.

ໃນພິທີ ທ່ານ ເພັດສະລາດ ວົງພະຈັນ ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ໄດ້ມີຄຳຄິດເຫັນ, ໂອ້ລົມ ແລະ ກ່າວເປີດກອງປະຊຸມຢ່າງເປັນທາງການ ເຊິ່ງຈຸດປະສົງໃນການຈັດກອງປະຊຸມເຜີຍແຜ່ກົດໝາຍ ໃນຄັ້ງນີ້ ກໍ່ເພື່ອໃຫ້ບັນດາພະນັກງານຫ້ອງການຕ່າງໆ, ບັນດາກຸ່ມບ້ານ, ນາຍບ້ານ ອ້ອມຂ້າງເມືອງແປກໄດ້ເຊື່ອມຊຶມ, ເຂົ້າໃຈເຖິງລະບຽບ, ຫຼັກການ ແລະ ມາດຕະການກ່ຽວກັບການເຄື່ອນໄຫວ, ຄຸ້ມຄອງ, ຕິດຕາມກວດກາທຸລະກິດ ແລະ ທຸລະກຳເງິນຕາຕ່າງປະເທດ ເພື່ອ

ໃຫ້ມີປະສິດທິພາບ-ປະສິດທິຜົນ, ຖືກຕ້ອງ ແນ່ໃສ່ຍົກສູງຄຸນຄ່າ ແລະ ສະຖຽນລະພາບ ຂອງເງິນຕາແຫ່ງຊາດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.



ຫຼັງຈາກນັ້ນ, ທ່ານ ວຽງວິໄລ ສຸດທິຈັກ ຫົວໜ້າພະແນກຫ້ອງການ-ຈັດຕັ້ງ ທຫລ.ຊຂ ໄດ້ຂຶ້ນບັນຍາຍກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເຊິ່ງກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ທີ່ນຳມາເຜີຍແຜ່ໃນຄັ້ງນີ້ ປະກອບມີ IX ພາກ, 08 ໝວດ ແລະ 54 ມາດຕາ.

ໃນຕອນທ້າຍກອງປະຊຸມ ທ່ານ ວຽງພອນ ເມືອງຈະເລີນ ເຈົ້າເມືອງ ເມືອງຄູນ ຍັງໄດ້ເນັ້ນໜັກໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມໃຫ້ເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ ໃນການຈັດຕັ້ງປະຕິບັດ ແລະ ເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຢ່າງລວມສູນ ແລະ ເປັນເອກະພາບ ເພື່ອຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ, ຊ່ວຍຊຸກຍູ້, ປຸກ ລະດົມໃຫ້ພໍ່ແມ່ປະຊາຊົນ, ການຈັດຕັ້ງທຸກພາກສ່ວນໃຫ້ການຮ່ວມມື, ເຂົ້າຮ່ວມໃນການເຄື່ອນໄຫວ, ຄຸ້ມ ຄອງເງິນຕາຕ່າງປະເທດ ດ້ວຍການສ້າງຈິດສຳນຶກໃຫ້ສັງຄົມນຳໃຊ້ເງິນກີບ ແລະ ເງິນຕາຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ເພື່ອຫຼຸດຜ່ອນການນຳໃຊ້ເງິນຕາຕ່າງປະເທດເທື່ອລະກ້າວ.

**ພາບ: ຈັນສະໝອນ ພົມມະຈັກ**

**✍ ຂ່າວ: ສຸກສະຫວັນ ພົມມະວົງ**